ຄະນະກຳມະການຈັດການແຂ່ງຂັນ

IIG EDUCATION LAOS

ຜູ້ສະໜັບສະໜູນຫລັກ

unitel



CERTIPORT® Microsoft Office Specialist

# Microsoft® Office Specialist WORLD CHAMPIONSHIP

ລາງວັນທີ 1
ມູນຄ່າລາງວັນ
40 ລ້ານກີບ
ມີສິດເຂົ້າແຂ່ງຂັນໃນ
ລະດັບໂລກທີ່ USA

## ການແຂ່ງຂັນຄວາມສາມາດດ້ານການນຳໃຊ້ ໄມໂຄຣຊອບ ອອບຟິສ ລະດັບໂລກ ປະຈຳປີ 2014 ຄັ້ງທຳອິດໃນ ສປປ ລາວ ທີ່ນັກຮຽນນັກສຶກສາລາວ ຈະມີໂອກາດໄປແຂ່ງຂັນໃນເວທີລະດັບໂລກ

ການແຂ່ງຂັນຄວາມສາມາດດ້ານການນຳໃຊ້ **Microsoft Office** ລະດັບໂລກ ປະຈຳປີ **2014** ຈັດການແຂ່ງຂັນໂດຍ **Certiport**. ຈຸດປະສົງແມ່ນເພື່ອສ້າງສະໜາມແຂ່ງຂັນທີ່ມີປະໂຫຍດສຳລັບນັກຮຽນນັກສຶກສາໃນທົ່ວໂລກ ແລະ ຄັດເລືອກເອົາຜູ້ເຂົ້າແຂ່ງຂັນທີ່ເກັ່ງທີ່ສຸດ ໃນແຕ່ລະປະເທດ ເຂົ້າຮ່ວມການແຂ່ງຂັນຮອບສຸດທ້າຍລະດັບໂລກ ຢູ່ປະເທດສະຫະລັດອາເມລິກາ.

ຄະນະກຳມະການຈັດງານການແຂ່ງຂັນລະດັບປະເທດແມ່ນ **ກະຊວງສຶກສາທິການ ແລະ ກິລາ** ຮ່ວມກັບ **ບໍລິສັດ ໄອໄອຈີ ສຶກສາ ລາວ ຈຳກັດ**. ການແຂ່ງຂັນແມ່ນມີຢູ່ 2 ຫົວຂໍ້ ເຊິ່ງຜູ້ແຂ່ງຂັນຈະຕ້ອງເລືອກ ເອົາຫົວຂໍ້ໃດໜຶ່ງທີ່ມີຊື່ຂ້າງລຸ່ມນີ້:

- **Microsoft Word 2010**
- **Microsoft Excel 2010**

( ພາສາທີ່ໃຊ້ໃນການສອບເສັງ: ພາສາອັງກິດ. ເວລາສອບເສັງ: 45-50 ນາທີ )

- **ຜູ້ເຂົ້າຮ່ວມການແຂ່ງຂັນ:**

ນັກຮຽນນັກສຶກສາ ສັນຊາດລາວ ທີ່ມີອາຍຸ 13 ຫາ 22 ປີ (ໃນວັນທີ 15 ມິຖຸນາ 2014) ຈາກມະຫາວິທະຍາໄລ, ວິທະຍາໄລ, ໂຮງຮຽນອາຊີວະສຶກສາ ແລະ ໂຮງຮຽນມັດທະຍົມສຶກສາ ຢູ່ ສປປ ລາວ.

- **ການເຂົ້າຮ່ວມການແຂ່ງຂັນ:**
  - ຄະນະກຳມະການຈັດການແຂ່ງຂັນ ອຸປະຖຳຄ່າສອບເສັງ 100% ສຳລັບຮອບທຳອິດ. ທີ່ຈະຈັດຂຶ້ນໃນ 4 ແຂວງຄື: ນະຄອນຫຼວງວຽງຈັນ, ຫຼວງພະບາງ, ສະຫວັນນະເຂດ ແລະ ຈຳປາສັກ.
  - ນັກຮຽນນັກສຶກສາ ຜູ້ທີ່ໄດ້ສອບເສັງແລ້ວ ແຕ່ຢາກສອບເສັງຄືນໃໝ່ຕື່ມອີກ ( ຜູ້ສະໝັກແຕ່ລະຄົນສາມາດສອບເສັງໄດ້ຫຼາຍຄັ້ງ ) ສາມາດລົງທະບຽນ ແລະ ມາສອບເສັງຢູ່ທີ່ ບໍລິສັດ ໄອໄອຈີ ສຶກສາ ລາວ ຈຳກັດ ນະຄອນຫລວງວຽງຈັນ. ຄ່າທຳນຽມການສອບເສັງ 200.000 ກີບ ຕໍ່ 1 ບົດສອບເສັງ ( ຈະສິ້ນສຸດການສອບເສັງຄັດເລືອກຮອບທຳອິດ ໃນວັນທີ 10 ພຶດສະພາ 2014).

ຫຼັງຈາກສອບເສັງແລ້ວ ຜູ້ເຂົ້າແຂ່ງຂັນຈະໄດ້ຮູ້ຜົນການສອບເສັງຂອງຕົນເອງທັນທີ ແລະ ຜູ້ທີ່ໄດ້ຄະແນນ 700 ຂຶ້ນໄປ ( ຄະແນນລວມແມ່ນ 1000 ຄະແນນ ) ຈະໄດ້ຮັບໃບຢັ້ງຢືນຄວາມສາມາດໃນລະດັບສາກົນຈາກ **Microsoft** ເຊິ່ງໃບຢັ້ງຢືນດັ່ງກ່າວນີ້ ແມ່ນນຳໃຊ້ໄດ້ໃນທົ່ວໂລກ. ຜູ້ເຂົ້າຮ່ວມແຂ່ງຂັນ 60 ຄົນ ທີ່ມີຄະແນນສູງສຸດ ແລະ ເກີນ 700 ຄະແນນ, ຈຶ່ງຈະມີສິດເຂົ້າແຂ່ງຂັນຮອບຊີງຊະນະເລີດລະດັບປະເທດ.

- **ປະເພດລາງວັນຮອບລະດັບປະເທດ**
  - **ລາງວັນສຳລັບບຸກຄົນ** ຂອງແຕ່ລະປະເພດ **Microsoft Word 2010** ແລະ **Microsoft Excel 2010**.
    - ລາງວັນທີ 1 : ມີ 1 ລາງວັນ, ຂັນລາງວັນ, ໃບຍ້ອງຍໍ ແລະ ມີສິດເຂົ້າແຂ່ງຂັນຮອບສຸດທ້າຍລະດັບໂລກທີ່ **USA**.
    - ລາງວັນທີ 2 : ມີ 1 ລາງວັນ, ລາງວັນມູນຄ່າ **5 ລ້ານກີບ** ແລະ ໃບຍ້ອງຍໍ.
    - ລາງວັນທີ 3 : ມີ 1 ລາງວັນ, ລາງວັນມູນຄ່າ **3 ລ້ານກີບ** ແລະ ໃບຍ້ອງຍໍ.
    - ລາງວັນຊົມເຊີຍ : ມີ 3 ລາງວັນ, ລາງວັນມູນຄ່າ **1 ລ້ານກີບ** ແລະ ໃບຍ້ອງຍໍ.

    ແລະ ຂອງຂວັນສຳລັບຜູ້ເຂົ້າແຂ່ງຂັນຮອບຊີງຊະນະເລີດທັງໝົດ.
  - **ລາງວັນເປັນທີມ** (ສຳລັບສະຖາບັນການສຶກສາ)
    - ໂຮງຮຽນໃນ 10 ອັນດັບທຳອິດທີ່ມີຄະແນນສູງ: ລາງວັນມູນຄ່າ **1 ລ້ານກີບ** ແລະ ໃບຍ້ອງຍໍ.
- **ແຜນການແຂ່ງຂັນ:**
  - ການແຂ່ງຂັນຮອບທຳອິດ ຢູ່ນະຄອນຫຼວງວຽງຈັນ (ພິທີເປີດເປັນທາງການ) ແລະ ແຂວງສະຫວັນນະເຂດ ວັນທີ 26 ເມສາ 2014.
  - ການແຂ່ງຂັນຮອບທຳອິດ ຢູ່ແຂວງຫຼວງພະບາງ ແລະ ແຂວງຈຳປາສັກ ວັນທີ 3 ພຶດສະພາ 2014.
  - ສິ້ນສຸດການສອບເສັງຄັດເລືອກໃນຮອບທຳອິດ ໃນວັນທີ 10 ພຶດສະພາ 2014.
  - ປະກາດລາຍຊື່ 60 ຄົນ ທີ່ໄດ້ເຂົ້າຮອບສຸດທ້າຍລະດັບປະເທດ ຜ່ານທາງເວັບໄຊທ໌ ແລະ ເຟສບຸກ ວັນທີ 16 ພຶດສະພາ 2014.
  - ການແຂ່ງຂັນຮອບສຸດທ້າຍລະດັບປະເທດ ວັນທີ 31 ພຶດສະພາ 2014 ທີ່ນະຄອນຫຼວງວຽງຈັນ.
  - ພິທີມອບລາງວັນ ວັນທີ 1 ມິຖຸນາ 2014 ທີ່ນະຄອນຫຼວງວຽງຈັນ.
  - ແຂ່ງຂັນຮອບສຸດທ້າຍລະດັບໂລກວັນທີ 27-30 ກໍລະກົດ 2014

    ທີ່ **Disneyland, Anaheim, California, USA**.

ຕິດຕາມຂ່າວສານໄດ້ທີ່:
**iigeducationlaos**

ສອບຖາມຂໍ້ມູນເພີ່ມຕື່ມ ໄດ້ທີ່:
ບໍລິສັດ ໄອໄອຈີ ສຶກສາ ລາວ (ໃກ້ກັບສີ່ແຍກໄຟແດງໜອງບອນ)
105 ຖະໜົນໜອງບອນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
ໂທ: 021 265421-2 | ແຟັກ: 021 265 420
ອີເມລ: xaykeo@iiglaos.com
ເວັບໄຊທ໌: **www.iiglaos.com**